

# ແຜນງານສາກົນ ກ່ຽວກັບນະໂຍບາຍທີ່ດິນທີ່ມີຄວາມຮັບຜິດຊອບ
# ບົດຮຽນການຈັດຕັ້ງປະຕິບັດທີ່ດີ

ສ.ປ.ປ. ລາວ: ການຕິດຕາມປະເມີນຜົນໂຄງການການລົງທຶນ

Deutsche Gesellschaft
für Internationale
Zusammenarbeit (GIZ) GmbH

# ແຜນງານ

ແຜນງານສາກົນກ່ຽວກັບນະໂຍບາຍທີ່ດິນທີ່ມີຄວາມຮັບຜິດຊອບ (GPRLP) ແມ່ນສ່ວນໜຶ່ງຂອງການລິເລີ່ມພິເສດ ທີ່ມີຊື່ວ່າ “ໜຶ່ງໂລກ, ບໍ່ມີຄວາມອຶດຫິວ” ຂອງກະຊວງການຮ່ວມມືດ້ານເສດຖະກິດ ແລະ ການພັດທະນາ ແຫ່ງສະຫະພັນສາທາລະນະລັດເຢຍລະມັນ (BMZ) ເຊິ່ງມີເປົ້າໝາຍຫຼຸດຜ່ອນຄວາມທຸກຍາກ ແລະ ໄພອຶດຫິວ ທີ່ຮຸນແຮງ.




ⓘ ຂໍ້ມູນເພີ່ມເຕີມກ່ຽວກັບ <u>ແຜນງານສາກົນນະໂຍບາຍ ທີ່ດິນທີ່ມີຄວາມຮັບຜິດຊອບ</u> ແລະ ຊຸດແຜນງານໃນປະເທດ<u>ລາວ</u>

ແຜນງານນີ້ໄດ້ຈັດຕັ້ງປະຕິບັດໂດຍ ຈີໄອແຊັດ Deutsche Gesellschaft für Internationale Zusammenarbeit (GIZ) GmbH ຢູ່ບັນດາປະເທດທົ່ວທະວີບອາຟຣິກາ, ອາຊີ ແລະ ອາເມຣິກາໃຕ້. ຈຸດປະສົງຫຼັກຂອງແຜນງານແມ່ນເພື່ອຮັບປະກັນການເຂົ້າເຖິງທີ່ດິນ ເຊິ່ງເປັນປັດໄຈສໍາຄັນໃນການຫຼຸດຜ່ອນຄວາມທຸກຍາກ ແລະ ໄພອຶດຫິວໃນຂົງເຂດຊົນນະບົດ ໂດຍສະເພາະສໍາລັບກຸ່ມທີ່ດ້ອຍໂອກາດເຊັ່ນ: ແມ່ຍິງ ແລະ ຊົນເຜົ່າພື້ນເມືອງ.

## ແຜນງານສາກົນໄດ້ຖືກຈັດຕັ້ງປະຕິບັດໃນສາມຂົງເຂດກິດຈະກໍາຄື:

- ປັບປຸງຂັ້ນຕອນໃນການຮັບປະກັນການເປັນເຈົ້າຂອງທີ່ດິນ ແລະ ສິດຂອງຜູ້ນໍາໃຊ້ສໍາລັບປະຊາຊົນຢູ່ເຂດຊົນນະບົດ
- ສົ່ງເສີມການມີສ່ວນຮ່ວມຂອງພາກປະຊາສັງຄົມ
- ປັບປຸງກອບເງື່ອນໄຂ framework conditions ສໍາລັບການລົງທຶນດ້ານກະສິກໍາທີ່ມີຄວາມຮັບຜິດຊອບ

ຢູ່ລາວ, ໂຄງການ **ເສີມສ້າງຄວາມໝັ້ນຄົງໃນການຄອບຄອງນໍາໃຊ້ທີ່ດິນ** (ELTeS), ທີ່ເປັນສ່ວນຫນຶ່ງຂອງແຜນງານສາກົນ, ໄດ້ສະຫນັບສະຫນູນການຮັບປະກັນສິດໃນການນໍາໃຊ້ ແລະ ເປັນເຈົ້າຂອງທີ່ດິນ, ສ້າງຄວາມເຂັ້ມແຂງໃຫ້ແກ່ຂະບວນການວາງແຜນ ແລະ ສົ່ງເສີມການລົງທຶນໃສ່ທີ່ດິນທີ່ມີຄວາມຮັບຜິດຊອບ. ອົງປະກອບຫຼັງນີ້ ແມ່ນໄດ້ຮັບການສະຫນັບສະຫນູນ ທຶນຮ່ວມຈາກສະຫະພາບເອີຣົບ (EU) ໂດຍຜ່ານໂຄງການສົ່ງເສີມການຄຸ້ມຄອງການລົງທຶນໃນຂົງເຂດທີ່ດິນທີ່ມີຄວາມຮັບຜິດຊອບ (RGIL). ແຜນງານໄດ້ຈັດຕັ້ງປະຕິບັດພາຍໃຕ້ RGIL ປະກອບມີ ກິດຈະກໍາການໃຫ້ຄວາມຮູ້, ການຕິດຕາມກວດກາ ແລະ ການປຶກສາຫາລື ທີ່ກ່ຽວຂ້ອງກັບການລົງທຶນດ້ານກະສິກໍາ ແລະ ປ່າໄມ້ ທີ່ມີຄວາມຮັບຜິດຊອບ. ຮູບແບບວິທີການຫນຶ່ງທີ່ສໍາຄັນໃນການປັບປຸງການຈັດຕັ້ງປະຕິບັດໃຫ້ເປັນໄປຕາມມາດຕະຖານດ້ານສິ່ງແວດລ້ອມ ແລະ ສັງຄົມສໍາລັບການລົງທຶນໃນຂົງເຂດທີ່ດິນ ແມ່ນການສະຫນັບສະຫນູນພາກລັດຂອງລາວ ໃນການຕິດຕາມກວດກາການລົງທຶນຢ່າງເປັນລະບົບ ລວມທັງການຕິດຕາມຄວາມຄືບໜ້າຢ່າງຕໍ່ເນື່ອງ ກ່ຽວກັບການປະຕິບັດບັນດາພັນທະທີ່ນັກລົງທຶນ, ປະຊາຊົນ ແລະ ໜ່ວຍງານຂອງລັດໄດ້ຕົກລົງຮ່ວມກັນ. ປະຈຸບັນ ໂຄງການRGIL ໄດ້ສະຫນັບສະຫນູນ ກິດຈະກໍາ **ການຕິດຕາມປະເມີນຜົນໂຄງການການລົງທຶນ** (IPM) ໃຫ້ແກ່ພາກລັດຢູ່ຂັ້ນທ້ອງຖິ່ນຢູ 19 ເມືອງໃນ 4 ແຂວງເປົ້າຫມາຍຄື ໄຊຍະບູລີ, ຫຼວງພະບາງ, ວຽງຈັນ ແລະ ບໍລິຄໍາໄຊ.

# ຈຸດເລີ່ມຕົ້ນ



ຢູ່ພາກກາງ ແລະ ພາກເໜືອຂອງລາວ, ສິນຄ້າຫຼັກຂອງການລົງທຶນ ດ້ານກະສິກຳແມ່ນ ຢາງພາລາ, ກ້ວຍ, ອ້ອຍ, ມັນຕົ້ນ ແລະ ສາລີ. ສວນປູກສ່ວນໃຫຍ່ແມ່ນເປັນຂອງນັກລົງທຶນຈີນທີ່ໄດ້ເຊົ່າ, ສຳປະທານທີ່ດິນ ຫຼື ເຮັດວຽກຮ່ວມກັບຊຸມຊົນ ໃນຮູບແບບການລົງທຶນແບບມີຂໍ້ຜູກພັນສັນຍາການຜະລິດກະສິກຳ.

ເຖິງວ່າການລົງທຶນດ້ານກະສິກຳດັ່ງກ່າວຈະສະໜອງວຽກເຮັດງານທຳ ແລະ ລາຍຮັບໃຫ້ແກ່ປະຊາຊົນໃນທ້ອງຖິ່ນກໍຕາມ ແຕ່ມັນກໍຍັງສ້າງຜົນກະທົບດ້ານລົບພໍສົມຄວນ ຕໍ່ການນຳໃຊ້ທີ່ດິນຂອງຊາວກະສິກອນທ້ອງຖິ່ນ, ຕໍ່ສຸຂະພາບຂອງເຂົາເຈົ້າ, ລວມເຖິງຕໍ່ຜົນຜະລິດ ແລະ ສິ່ງແວດລ້ອມ. ຊາວກະສິກອນທ້ອງຖິ່ນມັກຈະບໍ່ຮູ້ວ່າ ຕ້ອງສົ່ງຄຳຮ້ອງທຸກຫາໃຜ. ກອບກົດໝາຍໃນປະຈຸບັນຍັງມີຈຸດອ່ອນ ແລະ ຍິ່ງໄປກວ່ານັ້ນ ຍັງມີຂໍ້ຈຳກັດໃນການບັງຄັບໃຊ້ກົດໝາຍ. ການຄຸ້ມຄອງຂອງລັດ, ການຕິດຕາມກວດກາ ແລະ ກົນໄກການຮ້ອງທຸກສຳລັບການລົງທຶນໃສ່ທີ່ດິນ ຈຶ່ງມັກຈະບໍ່ມີປະສິດທິຜົນ.

ມີການນຳໃຊ້ສານເຄມີເປັນປະຈຳເພື່ອກຳຈັດສັດຕູພືດໃນການປູກກ້ວຍ

ນອກຈາກນີ້, ລະບົບຄວບຄຸມກວດກາທີ່ເໝາະສົມສຳລັບການເຊົ່າ ແລະ ການສຳປະທານທີ່ດິນ ລວມທັງສັນຍາການລົງທຶນປະເພດອື່ນໆແມ່ນຍັງບໍ່ທັນເປັນຮູບເປັນຮ່າງເທື່ອ. ໃນຂະນະດຽວກັນ, ບັນດາໜ່ວຍງານລັດກໍຍັງບໍ່ຈະແຈ້ງຕໍ່ກັບບົດບາດ ແລະ ຄວາມຮັບຜິດຊອບຂອງຕົນເອງ ແລະ ການປຶກສາຫາລືກັບຊຸມຊົນທ້ອງຖິ່ນແມ່ນຍັງມີໜ້ອຍຫຼາຍ.

# ຮູບແບບ

ການຕິດຕາມປະເມີນຜົນໂຄງການການລົງທຶນ (IPM) ແມ່ນພາກສ່ວນທີ່ສຳຄັນ ຂອງໂຄງການສົ່ງເສີມການຄຸ້ມຄອງການລົງທຶນໃສ່ທີ່ດິນທີ່ມີຄວາມຮັບຜິດຊອບ (RGIL) ທີ່ຮ່ວມທຶນໂດຍ EU ແລະ BMZ ເຊິ່ງເປັນສ່ວນຫນຶ່ງຂອງໂຄງການ ELTeS. RGIL ມີຈຸດປະສົງເພື່ອຮັບປະກັນໃຫ້ການລົງທຶນດ້ານກະສິກຳ ແລະ ປ່າໄມ້ ປະກອບສ່ວນເຂົ້າໃນການຄຸ້ມຄອງທີ່ດິນແບບຍືນຍົງ, ເຄົາລົບສິດ ແລະ ຄວາມຕ້ອງການຂອງປະຊາຊົນທ້ອງຖິ່ນ ແລະ ສົ່ງເສີມການນຳໃຊ້ທີ່ດິນໃຫ້ມີປະສິດທິຜົນ. ນອກຈາກກິດຈະກຳການຕິດຕາມ IPM ແລ້ວ, RGIL ຍັງມີກິດຈະກຳຕ່າງໆເຊັ່ນ ການໃຫ້ຄວາມຮູ້ແກ່ຊຸມຊົນ ກ່ຽວກັບການລົງທຶນທີ່ມີຄວາມຮັບຜິດຊອບ ແລະ ການຈັດກິດຈະກຳວັນພົບປະ ລະຫວ່າງ ນັກລົງທຶນ ແລະ ຊຸມຊົນ ແລະ ກອງປະຊຸມຫຼາຍຝ່າຍລະຫວ່າງ ນັກລົງທຶນ, ພາກລັດ ແລະ ຊຸມຊົນ.

ອົງປະກອບສຳຄັນຂອງ IPM ແມ່ນເພື່ອສະຫນັບສະຫນູນພະນັກງານພາກລັດຢູ່ຂັ້ນແຂວງ ແລະ ຂັ້ນເມືອງໃນການຕິດຕາມກວດກາຢ່າງເປັນລະບົບ ເພື່ອໃຫ້ບັນດາບໍລິສັດປະຕິບັດຕາມຂໍ້ກຳນົດທາງດ້ານກົດຫມາຍ ແລະ ການດຳເນີນທຸລະກິດທີ່ດີ. ຂັ້ນຕອນການຕິດຕາມກວດກາລວມມີ ການຕິດຕາມກວດກາປະຈຳປີວ່າ ບໍລິສັດໄດ້ປະຕິບັດຕາມຂໍ້ກຳນົດດ້ານສິ່ງແວດລ້ອມ,ເຄົາລົບການຄອບຄອງນຳໃຊ້ທີ່ດິນ ແລະ ຂໍ້ຕົກລົງຕ່າງໆທີ່ກ່ຽວຂ້ອງກັບທີ່ດິນ ແລະ ວິທີການປະຕິບັດຂອງບໍລິສັດຕໍ່ພະນັກງານ ກຳມະກອນ ແລະ ຄວາມສຳພັນກັບຊຸມຊົນທ້ອງຖິ່ນ.

ໃນເວລາຕິດຕາມກວດການັກລົງທຶນປະຈຳປີ IPM ນັ້ນ, ພາກລັດຂັ້ນທ້ອງຖິ່ນໄດ້ທຳການປ້ອນຂໍ້ມູນຈາກການສຳພາດນັກລົງທຶນໂດຍອີງໃສ່ລາຍການມາດຕະຖານການລົງທຶນ ເຂົ້າໃນມືຖືທີ່ມີແອັບ IPM ທີ່ສາມາດຄິດໄລ່ຄະແນນລວມຈາກການປະເມີນແຕ່ລະໂຄງການລົງທຶນ. ພະນັກງານພາກລັດທີ່ກ່ຽວຂ້ອງສາມາດເຂົ້າເຖິງຂໍ້ມູນກ່ຽວກັບປະເດັນບັນຫາ ແລະ ຂົງເຂດການປະຕິບັດທີ່ບໍ່ໄດ້ຕາມມາດຕະຖານທີ່ລັດວາງອອກ ເຊິ່ງລວມທັງຂໍ້ຕົກລົງຂອງສັນຍາຕ່າງໆໄດ້ທຸກເວລາ ພຽງແຕ່ກົດປຸ່ມໃນອຸປະກອນມືຖື. ໃນຊ່ວງການລົງຕິດຕາມກວດກາ, ທີມງານສາມາດສືບຕໍ່ປ້ອນຂໍ້ມູນໃຫມ່ເຂົ້າໃນລະບົບດິຈິຕອນດັ່ງກ່າວໄດ້.

ເພື່ອຮັບປະກັນວ່າ ການຮ້ອງທຸກ ແລະ ຂໍ້ສະເໜີ ຂອງຊຸມຊົນທີ່ໄດ້ຮັບຜົນກະທົບ ໄດ້ມີການເກັບກຳຢ່າງເປັນລະບົບ, ບົດບັນທຶກການຕິດຕາມກວດກາ (MoM) ແມ່ນໄດ້ມີການບັນທຶກໃນຮູບແບບດິຈິຕອນເຊັ່ນດຽວກັນ. ຮູບແບບວິທີການຂອງການຕິດຕາມ IPM ເຮັດໃຫ້ຮູ້ວ່າ ທັງ 3 ພາກສ່ວນ (ນັກລົງທຶນ, ຊຸມຊົນທີ່ໄດ້ຮັບຜົນກະທົບ ແລະ ລັດ) ມີບົດບາດສຳຄັນໃນການຫັນປ່ຽນການລົງທຶນ ໃຫ້ເກີດປະໂຫຍດແກ່ທຸກໆຝ່າຍ.




ຮູບພາບໜ້າຕາຂອງແອັບ

# ວິທີການ

**ແອັບການຕິດຕາມ IPM ປະກອບມີ 6 ມາດຕະຖານສໍາລັບການລົງທຶນທີ່ມີຄວາມຮັບຜິດຊອບ** ເຊິ່ງໄດ້ຮັບການພັດທະນາ ແລະ ຕົກລົງເຫັນດີຈາກ ກົມສົ່ງເສີມການລົງທຶນ (ກລທ) ເຊິ່ງຢູ່ພາຍໃຕ້ກະຊວງແຜນການ ແລະ ການລົງທຶນ (ກຜທ) ແລະ ພະແນກແຜນການ ແລະ ການລົງທຶນຂັ້ນແຂວງ ຢູ່ບັນດາແຂວງເປົ້າຫມາຍ. ກົມສົ່ງເສີມການລົງທຶນ ແມ່ນເປັນເຈົ້າຂອງແອັບ IPM. ບັນດາມາດຕະຖານທັງຫມົດທີ່ນໍາໃຊ້ແມ່ນອີງໃສ່ກອບກົດຫມາຍຂອງລາວ ແລະ ຖອດຈາກບົດແນະນໍາຂອງສາກົນ ເຊັ່ນ: <u>ບົດແນະນໍາຕາມຄວາມສະຫມັກໃຈ ກ່ຽວກັບ ການບໍລິຫານສິດຄອບຄອງນໍາໃຊ້ຢ່າງມີຄວາມຮັບຜິດຊອບຕໍ່ທີ່ດິນ, ການປະມົງ ແລະ ປ່າໄມ້ ໃນກອບຂອງຄວາມໝັ້ນຄົງທາງດ້ານສະບຽງອາຫານແຫ່ງຊາດ (VGGT)</u>, <u>ຫຼັກການກ່ຽວກັບການລົງທຶນດ້ານກະສິກໍາທີ່ມີຄວາມຮັບຜິດຊອບ (RAI)</u> ຂອງຄະນະກໍາມາທິການດ້ານຄວາມໝັ້ນຄົງທາງດ້ານສະບຽງອາຫານໂລກ ແລະ ມາດຕະຖານການຍິນຍອມດ້ວຍຄວາມສະຫມັກໃຈ ໂດຍໄດ້ຮັບຂໍ້ມູນລ່ວງໜ້າ ແລະ ພຽງພໍ (FPIC).

ໂຄງການລົງທຶນທີ່ຖືກຄັດເລືອກແມ່ນມີການວິເຄາະ ໂດຍອີງຕາມ **6 ມາດຕະຖານ** ຂ້າງລຸ່ມນີ້.




6 ມາດຕະຖານຂອງ IPM

ໂດຍນໍາໃຊ້ແບບສອບຖາມແບບມີໂຄງສ້າງ, ໂຄງການລົງທຶນແມ່ນໄດ້ຮັບການປະເມີນໂດຍການໃຫ້ຄະແນນສໍາລັບແຕ່ລະມາດຕະຖານ. ລະດັບຂອງການໃຫ້ຄະແນນ ແມ່ນຈາກ 0 ຫາ 5. ມີການນໍາໃຊ້ຄໍາຖາມທີ່ເປັນມາດຕະຖານ ເພື່ອສໍາພາດພາກສ່ວນທີ່ກ່ຽວຂ້ອງຂອງແຕ່ລະໂຄງການລົງທຶນ ຊຶ່ງປະກອບມີ:

1. ຕົວແທນບໍລິສັດ.
2. ພະນັກງານຂອງບໍລິສັດ.
3. ຕົວແທນຂອງຊຸມຊົນໃກ້ຄຽງທີ່ໄດ້ຮັບຜົນກະທົບ.

ຈຸດປະສົງຂອງລະບົບການໃຫ້ຄະແນນ ແມ່ນເພື່ອວັດແທກການປັບປຸງການປະຕິບັດການລົງທຶນ ທີ່ເປັນຜົນມາຈາກການສະຫນັບສະຫນູນບັນດາກິດຈະກໍາ ການລົງທຶນທີ່ມີຄວາມຮັບຜິດຊອບ ທີມີການປະເມີນປະຈໍາປີ ເຊິ່ງຜ່ານມາ ໄດ້ຈັດທັງໝົດ 3 ຮອບວຽນ. ຈຸດສຸມຫຼັກຂອງການຕິດຕາມປະເມີນຜົນໂຄງການລົງທຶນແມ່ນເພື່ອກວດສອບການປະຕິບັດຕາມມາດຕະຖານ.

ແອັບ IPM ແລະ MoM ໄດ້ຖືກອອກແບບໂດຍພະນັກງານ GIZ ELTeS ແລະ RGIL ໂດຍມີການປະສານງານຢ່າງໃກ້ຊິດກັບຄູ່ຮ່ວມງານພາກລັດ ໃນການນໍາໃຊ້ຊອຟແວຣ໌ສະເພາະທີ່ສະດວກໃນການເບິ່ງຕົວເລກ ແລະ ຂໍ້ມູນ ແລະ ຕິດຕາມຜົນການຕິດຕາມປະເມີນຜົນ. ການອອກແບບແມ່ນເນັ້ນໃສ່ໃຫ້ເຂົ້າໃຈງ່າຍ  ເປັນມິດກັບຜູ້ໃຊ້ງານ ແລະ ເຫມາະສົມກັບລະດັບຄວາມຮູ້ຂອງຫນ່ວຍງານທ້ອງຖິ່ນ, ໂດຍສະເພາະຂັ້ນເມືອງ, ເພື່ອຮັບປະກັນການນໍາໃຊ້ໄລຍະຍາວ. ພ້ອມກັນນັ້ນ, ການພັດທະນາ ແລະ ບໍາລຸງຮັກສາແມ່ນມີຄ່າໃຊ້ຈ່າຍຕໍ່າ. ຫຼັງຈາກໄລຍະທົດລອງທີ່ໄດ້ຈັດການຝຶກອົບຮົມຫຼາຍຄັ້ງ ພ້ອມທັງການຕິດຕາມກວດກາຮ່ວມກັນ ໂດຍມີພະນັກງານ GIZ ທີ່ໃຫ້ການຊ່ວຍເຫຼືອຄູ່ຮ່ວມງານພາກລັດ, ໜ່ວຍງານຂັ້ນເມືອງແມ່ນສາມາດນໍາໃຊ້ເຄື່ອງມືນີ້ໄດ້ດ້ວຍຕົນເອງ ພາຍຫຼັງ 2 ປີທີ່ມີການລິເລີ້ມກິດຈະກໍາດັ່ງກ່າວ.

# ການປ່ຽນແປງໃນທາງບວກ

1. ຜ່ານການຝຶກອົບຮົມ IPM ແບບລົງເລິກ ແລະ ລະອຽດ, ມາຮອດປັດຈຸບັນ ມີ **ພະນັກງານລັດ 154 ຄົນ** (ຍິງ 31%) ສາມາດ **ນໍາໃຊ້ເຄື່ອງມືຕິດຕາມກວດກາການລົງທຶນໄດ້ດ້ວຍຕົນເອງ**, ໂດຍໄດ້ຮັບການແນະນໍາຈາກທີ່ປຶກສາຂອງ GIZ ໃນບາງກໍລະນີທີ່ຈໍາເປັນເທົ່ານັ້ນ. ໃນຊ່ວງເວລາປະມານ 3 ປີຂອງການຕິດຕາມປະເມີນ ໂດຍອີງຕາມມາດຕະຖານການໃຫ້ຄະແນນທີ່ໄດ້ຕົກລົງກັນ ມີ **135 ໂຄງການລົງທຶນ** ເຂົ້າຮ່ວມການຕິດຕາມປະເມີນຜົນໂຄງການ, ໃນນັ້ນ **59 ໂຄງການ (44%) ໄດ້ຄ່ອຍໆປັບປຸງການດໍາເນີນງານຂອງຕົນ** ໃຫ້ດີຂຶ້ນ.

135 ໂຄງການລົງທຶນ ໄດ້ເຂົ້າຮ່ວມ ການຕິດຕາມປະເມີນຜົນ ແລະ ປະຕິບັດຕາມ, ໃນນັ້ນ 59 ໂຄງການ (44%) ໄດ້ຄ່ອຍໆປັບປຸງການດໍາເນີນງານ ຂອງຕົນໃຫ້ດີຂຶ້ນ.

2. ນອກຈາກນີ້, ການເປັນສ່ວນຫນຶ່ງໃນຂະບວນການ IPM ໄດ້ກະຕຸ້ນໃຫ້ **ນັກລົງທຶນ** ສະແດງ **ຄວາມສົນໃຈໃນການຮຽນຮູ້ ແລະ ການຮັບຂໍ້ມູນໃໝ່ໆກ່ຽວກັບກອບກົດໝາຍ**. ເຊິ່ງຍັງໄດ້ຊຸກຍູ້ໃຫ້ເຂົາເຈົ້າ **ເຂົ້າຮ່ວມໃນກອງປະຊຸມຫຼາຍຝ່າຍ ແລະ ການປຶກສາຫາລືລະຫວ່າງນັກລົງທຶນ ແລະ ຊຸມຊົນ** ເພື່ອປັບປຸງປະສິດທິພາບໃນການດໍາເນີນທຸລະກິດຂອງເຂົາເຈົ້າ.

3. **ຊຸມຊົນ** ຢູ່ບັນດາເມືອງເປົ້າຫມາຍທີ່ໄດ້ **ເຂົ້າຮ່ວມຢ່າງຕັ້ງໜ້າ ໃນກິດຈະກໍາການໃຫ້ຄວາມຮູ້** ກໍໄດ້ມີການຕິດຕາມປະເມີນຜົນຜ່ານ IPM ເຊັ່ນກັນ, ໂດຍ **ຮຽນຮູ້ກ່ຽວກັບສິດທິຂອງຕົນ** ໃນຂະບວນການລົງທຶນໃສ່ທີ່ດິນ, ການ **ສະເໜີຂໍ້ກັງວົນ ແລະ ການເຈລະຈາໂດຍກົງກັບນັກລົງທຶນ** ແລະ ໜ່ວຍງານທີ່ກ່ຽວຂ້ອງ.

4. ເຄື່ອງມືດັ່ງກ່າວໄດ້ຮັບການປັບປຸງເທື່ອລະກ້າວ ແລະ ກະຊວງແຜນການ ແລະ ການລົງທຶນໄດ້ສະເໜີໃຫ້ນໍາໃຊ້ເຂົ້າໃນການຕິດຕາມປະເມີນຜົນການລົງທຶນ ໃນຂະແໜງອື່ນທີ່ນອກເໜືອຈາກຂະແໜງກະສິກໍາ ແລະ ປ່າໄມ້ ພ້ອມທັງສະເໜີໃຫ້ມີການນໍາໃຊ້ທົ່ວປະເທດ.




ຕົວຢ່າງຈາກການໃຫ້ຄະແນນໃນຕົວຈິງຂອງບັນດາບໍລິສັດທີ່ລົງທຶນຢູ່ເມືອງແກ່ນທ້າວ, ແຂວງໄຊຍະບູລີ, ໃນລະດັບຄະແນນຈາກ 0 ຫາ 5 (ບໍ່ລະບຸຊື່ບໍລິສັດ)

# ການຜັນຂະຫຍາຍການນຳໃຊ້



ການຝຶກອົບຮົມ ວິທີການນຳໃຊ້ແທັບເລັດເພື່ອຈຸດປະສົງຂອງ IPM ໃຫ້ແກ່ພະນັກງານພາກລັດ

**ເຄືອຂ່າຍ RAI ໃນລາວ ແມ່ນເວທີສຳຄັນ** ໃນການສົ່ງເສີມການລົງທຶນດ້ານກະສິກຳທີ່ມີຄວາມຮັບຜິດຊອບຢູ່ພາຍໃນ ແລະ ພາກພື້ນ. ເຄືອຂ່າຍດັ່ງກ່າວປະກອບມີຄູ່ຮ່ວມພັດທະນາ ແລະ ອົງການຈັດຕັ້ງທາງສັງຄົມ ເຊັ່ນ GIZ, ອົງການອາຫານ ແລະ ການກະເສດ (FAO), ອົງການສະຫະປະຊາຊາດເພື່ອການພັດທະນາ (UNDP) ແລະ ໂຄງການບໍລິຫານລັດກ່ຽວກັບທີ່ດິນປະຈຳພາກພື້ນແມ່ນ້ຳຂອງ (MRLG) ລວມທັງ ອົງການບ້ານຈຸດສຸມສາກົນ (VFI), Oxfam, Helvetas ແລະ ອື່ນໆ. ເວທີນີ້ມີບົດບາດສຳຄັນໃນການຜັນຂະຫຍາຍການນຳໃຊ້ IPM ເນື່ອງຈາກເປັນເວທີສຳລັບໃຫ້ຄູ່ຮ່ວມພັດທະນາອື່ນໆໄດ້ຮຽນຮູ້ຈາກປະສົບການ IPM ຂອງໂຄງການ ແລະ ອາດຈະສາມາດສະໜັບສະໜູນຄູ່ຮ່ວມງານພາກລັດຂອງເຂົາເຈົ້າ ທາງດ້ານເຕັກນິກ ແລະ ການເງິນ ເພື່ອຈັດຕັ້ງປະຕິບັດກິດຈະກຳທີ່ສອດຄ່ອງກັນ.

ນອກຈາກນີ້, ພະນັກງານ GIZ ຍັງມີບົດບາດຢ່າງຕັ້ງໜ້າໃນຖານະເປັນຖານສຽງທີ່ປຶກສາໃຫ້ ກະຊວງແຜນການ ແລະ ການລົງທຶນ ແລະ ຍັງເປັນສະມາຊິກຂອງຄະນະສະເພາະກິດໃນການພັດທະນາ ແລະ ປັບປຸງເອກະສານນິຕິກຳທີ່ກ່ຽວຂ້ອງ ເຊັ່ນ ກົດຫມາຍວ່າດ້ວຍການລົງທຶນປີ 2016 ແລະ ນິຕິກຳສະບັບໃຫມ່ ກ່ຽວກັບຂໍ້ຜູກພັນສັນຍາການຜະລິດກະສິກຳ. ລະບຽບກົດໝາຍເຫຼົ່ານີ້ ແມ່ນເປັນຖານໃນການສ້າງມາດຕະຖານຕ່າງໆທີ່ໃຊ້ໃນເຄື່ອງມື IPM. ບັນດາລະບຽບກົດໝາຍດັ່ງກ່າວຍັງເປັນບ່ອນອີງໃນການຕິດຕາມກວດກາໂຄງການລົງທຶນທາງດ້ານກະສິກຳ ແລະ ປ່າໄມ້ໃນຕໍ່ໜ້າ ພ້ອມທັງຜັນຂະຫຍາຍການຕິດຕາມກວດກາໂຄງການລົງທຶນ ໃນຂະແໜງການອື່ນໆໃນລາວ.

ສຳລັບການຜັນຂະຫຍາຍການນຳໃຊ້ ເຄື່ອງມື IPM ໃນຮູບແບບອື່ນໆ, ປະເດັນຕໍ່ໄປນີ້ຖືວ່າເປັນອົງປະກອບທີ່ສຳຄັນ:

- ປະເມີນຄວາມຕ້ອງການຢ່າງຊັດເຈນໃນການຕິດຕາມປະເມີນຜົນຮ່ວມກັບຄູ່ຮ່ວມງານ ແລະ ລະບຽບການ ແລະ ມາດຕະຖານທີ່ມີຢູ່ແລ້ວ ທີ່ຈະຕ້ອງກຳນົດເຂົ້າໃນລະບົບຕິດຕາມປະເມີນຜົນ
- ພັດທະນາແບບສອບຖາມທີ່ຮອບດ້ານ ໂດຍອີງໃສ່ການປະເມີນຂ້າງເທິງ ພ້ອມທັງປັບປຸງຄືນຖ້າຈຳເປັນ ເພື່ອໃຫ້ແນ່ໃຈວ່າມາດຕະຖານ IPM ແມ່ນເຫມາະສົມກັບຈຸດປະສົງ
- ເລືອກແອັບ ແລະ ຊອຟແວຣ໌ ທີ່ເປັນມິດກັບຜູ້ໃຊ້ (ເຊັ່ນ *Appsheet*) ສຳລັບການເກັບກຳຂໍ້ມູນ ແລະ ມີການປັບປຸງຢ່າງຕໍ່ເນື່ອງ ໂດຍອີງໃສ່ປະສົບການຈາກການຈັດຕັ້ງປະຕິບັດ
- ຮັບປະກັນວ່າຖານຂໍ້ມູນທ້ອງຖິ່ນ ສຳລັບການເກັບຮັກສາຂໍ້ມູນ ແມ່ນມີຄວາມພ້ອມ ແລະ ມີງົບປະມານສຳລັບການບຳລຸງຮັກສາເປັນປະຈຳ; ຖ້າບໍ່ດັ່ງນັ້ນ ກໍອາດນຳໃຊ້ທາງເລືອກອື່ນ ເຊັ່ນຖານຂໍ້ມູນອອນລາຍ
- ຄຳນຶງເຖິງການຄຸ້ມຄອງຂໍ້ມູນ ແລະ ຄວາມປອດໄພຂອງຂໍ້ມູນ ແລະ ຕັດສິນໃຈວ່າຜູ້ໃດຄວນຖືກຳມະສິດເປັນເຈົ້າຂອງລະບົບຕິດຕາມກວດກາ
- ພັດທະນາທັກສະທີ່ຈຳເປັນ ໃຫ້ບັນດາພະນັກງານລັດໃນທຸກລະດັບທີ່ມີບົດບາດຮັບຜິດຊອບ ໂດຍການຝຶກອົບຮົມ ເພື່ອໃຫ້ພວກເຂົາສາມາດນຳໃຊ້ແອັບດັ່ງກ່າວໄດ້ດ້ວຍຕົນເອງ

# ຂໍ້ມູນເພີ່ມເຕີມ

ການສົ່ງເສີມຄຸນນະພາບການລົງທຶນ – ບົດລາຍງານການປະເມີນຜົນກະທົບ, GIZ Laos (2018) (ເຂົ້າໄດ້ສະເພາະພະນັກງານ GIZ)

ຄໍາແນະນໍາກ່ຽວກັບ ການພິຈາລະນາອະນຸມັດການລົງທຶນ ແລະ ກົນໄກການຄຸ້ມຄອງທີ່ດິນໃຫ້ເຊົ່າ ຫຼື ການສໍາປະທານ ສໍາລັບປູກພືດກະສິກໍາ, ກຜທ (2019)

ສົ່ງເສີມການປະຕິບັດທີ່ດີກວ່າເກົ່າໃນການນໍາໃຊ້ທີ່ດິນ ໃນບັນດາທຸລະກິດກະສິກໍາໃນລາວ:




ເລື່ອງລາວຄວາມປ່ຽນແປງ ກ່ຽວກັບບໍລິສັດປູກກ້ວຍ ຈີນ, ແຂວງໄຊຍະບູລີ, GIZ (2019)




ເລື່ອງລາວຄວາມປ່ຽນແປງ ກ່ຽວກັບບໍລິສັດຊານິພົນຊັບ, ແຂວງໄຊຍະບູລີ, GIZ (2019)




ມຸ້ງໜ້າສູ່ການລົງທຶນດ້ານກະສິກໍາທີ່ມີຄວາມຮັບຜິດຊອບ ໃນ ສປປ ລາວ – ບົດສຶກສາ ກ່ຽວກັບປະສົບການທຸລະກິດກະສິກໍາ, GIZ (2018)




Factsheet ນະໂຍບາຍດ້ານທີ່ດິນທີ່ມີຄວາມຮັບຜິດຊອບໃນລາວ, GIZ (2021)




Factsheet ສົ່ງເສີມການຄຸ້ມຄອງການລົງທຶນໃສ່ທີ່ດິນທີ່ມີຄວາມຮັບຜິດຊອບໃນລາວ, GIZ (2021)

# ຂໍ້ມູນບັນນາທິການ

**ຈັດພິມໂດຍ:**
Deutsche Gesellschaft für
Internationale Zusammenarbeit (GIZ) GmbH

ສໍານັກງານຂຶ້ນທະບຽນ
ບອນ ແລະ ເອດຈ໌ບອນ, ປະເທດເຢຍລະມັນ

Department Rural Development, Agriculture
Friedrich Ebert Allee 36 + 40
53113 Bonn, Germany
T +49 228 44 60-0
F +49 228 44 60-17 66

E GlobalvorhabenLand@giz.de
I www.giz.de/responsiblelandpolicy

**ຜູ້ຮັບຜິດຊອບ:**
Dr. Klaus Ackermann
klaus.ackermann@giz.de

Eva Prediger
eva.prediger@giz.de

**ຂຽນໂດຍ:**
ຂັນແກ້ວ ອຸປຣະວັນ & Nora Teufel, Harald Rettner

**ອອກແບບ & ຮູບແຕ້ມໂດຍ:**
Katrin Straßburger / W4 Büro für Gestaltung

**ຮູບພາບໂດຍ:**
ໜ້າປົກ & ໜ້າ 7: © ຂັນແກ້ວ ອຸປຣະວັນ, ໜ້າ 3: © ວິສຸດາ ຊິກສີດາວ
ຮູບແຕ້ມ Smartphone ໜ້າ 4 & 6: © rawpixel.com

**ແຜນທີ່:**
ແຜນທີ່ທີ່ພິມລົງໃນທີ່ນີ້ແມ່ນມີຈຸດປະສົງເປັນຂໍ້ມູນເທົ່ານັ້ນ ແລະ ບໍ່ໄດ້ໝາຍເຖິງການຮັບຮອງເອົາຂອບເຂດ ແລະ ເຂດແດນພາຍໃຕ້ກົດໝາຍສາກົນ. GIZ ບໍ່ໄດ້ຖືຄວາມຮັບຜິດຊອບວ່າແຜນທີ່ເຫຼົ່ານີ້ແມ່ນສະບັບປັບປຸງໃໝ່ລ່າສຸດ, ມີຄວາມຖືກຕ້ອງ ຫຼື ສົມບູນ. ຄວາມຮັບຜິດຊອບທັງໝົດສໍາລັບຄວາມເສຍຫາຍໃດໆ, ທາງກົງ ຫຼື ທາງອ້ອມ, ທີ່ເກີດຈາກການນໍາໃຊ້ແຜນທີ່ແມ່ນຖືກຍົກເວັ້ນ.

ບອນ, ພະຈິກ 2021

ສິ່ງພິມສະບັບນີ້ຖືກຜະລິດດ້ວຍທຶນສະໜັບສະໜູນຈາກ ສະຫະພາບເອີຣົບ (EU) ແລະ ກະຊວງການຮ່ວມມືດ້ານເສດຖະກິດ ແລະ ການພັດທະນາ ແຫ່ງປະເທດເຢຍລະມັນ (BMZ). ເນື້ອໃນທັງໝົດແມ່ນຢູ່ໃນຄວາມຮັບຜິດຊອບຂອງ GIZ ແຕ່ພຽງຜູ້ດຽວ ແລະ ບໍ່ໄດ້ສະທ້ອນເຖິງທັດສະນະຂອງ EU ຫຼື ກະຊວງການຮ່ວມມືດ້ານເສດຖະກິດ ແລະ ການພັດທະນາ (BMZ).

Co-funded by the European Union

german
cooperation
DEUTSCHE ZUSAMMENARBEIT